رئاسة الشؤون الدينية
بالمسجد الحرام والمسجد النبوي

ລາວ | لاو | كَيْفِيَّةُ صَلَاةِ النَّبِيِّ صَلَّى اللهُ عَلَيْهِ وَسَلَّمَ

# ວິທີນະມາຊການຕາມແບບຢ່າງ ຂອງທ່ານນະບີ ﷺ

ສາດສະດາຈານຜູ້ຊີງດຸນນະວຸດ
ອັບດຸລອະຊີຊ ບິນ ອັບດຸລລໍຫ໌ ບິນ ບາຊ

ح جمعية خدمة المحتوى الإسلامي باللغات ، ١٤٤٧هـ

بن باز ، عبدالعزيز
كيفية صلاة النبي صلى الله عليه وسلم - لاو. / بن باز ،
عبدالعزيز ؛ جمعية خدمة المحتوى الإسلامي باللغات - ط١. .-
الرياض ، ١٤٤٧هـ
٢٦ ص ؛ ..سم

رقم الإيداع: ١٤٤٧/٩٧٣١
ردمك: ٩٧٨-٦٠٣-٥١٧-٠٤٧-٥

# كَيْفِيَّةُ صَلَاةِ النَّبِيِّ صَلَّى اللهُ عَلَيْهِ وَسَلَّمَ

# ວິທີນະມາຊການຕາມແບບຢ່າງຂ
# ອງທ່ານນະບີ ﷺ


لِفَضِيلَةِ الشَّيْخِ العَلَّامَةِ

عَبْدِ العَزِيزِ بْنِ عَبْدِ اللَّهِ بْنِ بَازٍ

غَفَرَ اللَّهُ لَهُ وَلِوَالِدَيْهِ وَلِلْمُسْلِمِينَ

ສາດສະດາຈານຜູ້ຊິງຄຸນນະວຸດ

ອັບດຸລອະຊີຊ ບິນ ອັບດຸລລໍຫ໌ ບິນ ບາຊ

بِسْمِ اللهِ الرَّحمَنِ الرَّحِيمِ

## ວິທີນະມາຊການຕາມແບບຢ່າງຂອງທ່ານນະບີ ﷺ

ສາດສະດາຈານຜູ້ຊົງຄຸນນະວຸດ

ອັບດຸລອະຊີຊ ບິນ ອັບດຸລລໍຫ໌ ບິນ ບາຊ

ດ້ວຍພຣະນາມຂອງອັລລໍຫ໌ ຜູ້ຊົງເມດຕາ ກະລຸນາປານີສະເໝີ

ມວນການສັນລະເສີນທັ້ງຫຼາຍເປັນສິດຂອງອັລລໍຫ໌ພຽງຜູ້ດຽວ

ຂໍການອວຍພອນຄວາມສັນຕິສຸກຈົ່ງມີແດ່ບ່າວຂອງພຣະອົງ ແລະ ຣໍຊູລຂອງພຣະອົງ ນະບີມູຮໍາມັດ ແລະ ຕະຫຼອດຈົນບັນດາວົງວານຕະກູນ ແລະ ມິດສະຫາຍຂອງທ່ານ, ຕໍ່ໄປນີ້:

ນີ້ຄື ການອະທິບາຍສັ້ນໆ ກ່ຽວກັບການລະຫມາດຕາມແບບຢ່າງຂອງທ່ານ ນະບີ ຊໍລລັລລໍຮຸ ອະໄລຮິ ວະສັລລໍາ ທີ່ຂ້ອຍຂໍນໍາສະເໜີແດ່ພີ່ນ້ອງມຸສລິມມີນ ແລະ ມຸສລິມະຫ໌ ເພື່ອໃຫ້ທຸກຄົນທີ່ໄດ້ອ່ານຈະໄດ້ຮັບຄວາມຮູ້ ແລະ ເຂົ້າໃຈຫຼັກປະຕິບັດ ທີ່ຖືກຕ້ອງຕາມແບບຢ່າງຂອງທ່ານນະບີ ຊໍລລັລລໍຮຸ ອະໄລຮິ ວະສັລລໍາ ດັ່ງທີທ່ານນະບີ ﷺ ໄດ້ກ່າວໄວ້ວ່າ:

(صَلُّوا كَمَا رَأَيْتُمُونِي أُصَلِّي) .

ຄວາມວ່າ:

"ທ່ານທັງຫຼາຍຈົ່ງລະຫມາດຄືທີ່ທ່ານເຫັນຂ້ອຍລະຫມາດ"[1].
ໃຫ້ຜູ້ອ່ານອະທິບາຍກ່ຽວເລື່ອງດັ່ງກ່າວ
(ການນະມາຊແບບໃດ).

1. ການອາບນໍ້າລະຫມາດໃຫ້ສົມບູນ.

ກ່າວຄື
ການອາບນໍ້າລະຫມາດໂດຍປະຕິບັດຕາມໂອງການຂອງອັລລໍ ຫ໌ ທີ່ພຣະອົງ ໄດ້ກ່າວໄວ້ວ່າ:

﴿يَـٰٓأَيُّهَا ٱلَّذِينَ ءَامَنُوٓاْ إِذَا قُمْتُمْ إِلَى ٱلصَّلَوٰةِ فَٱغْسِلُواْ وُجُوهَكُمْ وَأَيْدِيَكُمْ إِلَى ٱلْمَرَافِقِ وَٱمْسَحُواْ بِرُءُوسِكُمْ وَأَرْجُلَكُمْ إِلَى ٱلْكَعْبَيْنِ...﴾.

ຄວາມໝາຍ: (ໂອ້ ບັນດາຜູ້ສັດທາທັງຫຼາຍ ເມື່ອພວກເຈົ້າຍືນຂຶ້ນເພື່ອປະຕິບັດການລະຫມາດ ກໍ່ຈົ່ງລ້າງໜ້າຂອງພວກເຈົ້າ ແລະ ມືຂອງພວກເຈົ້າຈົນຮອດຂໍ້ສອກ ຈົ່ງລູບຫົວ ແລະ ຈົ່ງລ້າງຕີນຂອງພວກເຈົ້າຈົນຮອດຕາຕຸ່ມທັງສອງ ..... ) [ຊູເຣາະຫ໌ ອັລ-ມາອິດະຫ໌ ບົດທີ່ 6]. ອັລອາຍະຫ໌.

ດັ່ງທີທ່ານນະບີ ຊໍລລັລລໍຮຸ ອະໄລຮິ ວະສັລລໍາ ໄດ້ກ່າວໄວ້ວ່າ:

(لَا تُقْبَلُ صَلَاةٌ بِغَيْرِ طُهُورٍ) .

ຄວາມໝາຍວ່າ:
(ການລະຫມາດທີ່ປາດສະຈາກຄວາມສະອາດ (ການອາບນໍ້າລະຫມາດ) ຈະບໍ່ຖືກຕອບຮັບ)[2].

ແລະ ດັ່ງຄໍາກ່າວຂອງທ່ານນະບີ ຊໍລລັລລໍຮຸ ອະໄລຮິ ວະສັລລໍາ ສໍາຫຼັບຜູ້ທີ່ລະຫມາດຂອງເຂົາບໍ່ຖືກຕ້ອງ:

---

[1] ບັນທຶກໂດຍອັລບຸກໍຣີ : ເລກທີ່ (605)

[2] ບັນທຶກໂດຍມຸສລິມ, ເລກທີ່ (224)

(إِذَا قُمْتَ إِلَى الصَّلَاةِ، فَأَسْبِغِ الْوُضُوءَ).

ຄວາມໝາຍວ່າ : (ເມື່ອເຈົ້າຈະເຮັດການລະຫມາດ ກໍ່ຈົ່ງເຮັດວຸດູ ອາບນ້ຳລະຫມາດໃຫ້ຄົບຖ້ວນເຖີດ)[1].

2. ໃຫ້ຜູ້ລະຫມາດຫັນໜ້າໄປທາງກິບລັດ

ກ່າວຄືຫັນໜ້າ ແລະ ຮ່າງກາຍທັ້ງໝົດໄປທາງທິດກະບະຫ໌ ເຊິ່ງຕັ້ງຢູ່ທີ່ນະຄອນເມືອງ ມັກກະຫ໌ ປະເທດຊາອຸດິ ອາຣາເບັຍ ດ້ວຍການຕັ້ງເຈດຈະນາວ່າຈະເຮັດການລະຫມາດຕາມທີ່ໄດ້ຕັ້ງໃຈເອົາໄວ້ ບໍ່ວ່າຈະເປັນການລະຫມາດຟັຣດູ (ພາກບັງຄັບ) ຫຼື ສຸ ນັດ (ພາກສົ່ງເສີມ) ແລະ ບໍ່ຕ້ອງເວົ້າຈາອອກມາຈາກສິ່ງທີ່ຕັ້ງໃຈໄວ້ ເພາະວ່າການເວົ້າຈາເປັນສຽງອອກມານັ້ນມີບິດບັນຍັດໄວ້ວ່າເປັນ "ບິດອະຫ໌" ຄື ການເຮັດສິ່ງອື່ນຈາກສິ່ງທີ່ທ່ານນະບີບໍ່ໄດ້ປະຕິບັດ ແລະ ທ່ານນະບີເອງກໍ່ບໍ່ເຄີຍກ່າວນຽດ ຫຼື ສິ່ງທີ່ຕັ້ງໃຈອອກມາເປັນວາຈາ ບັນດາສໍຫາບະຫ໌(ສະຫາຍ)ຂອງທ່ານນະບີກໍ່ເຄີຍເຮັດເຊັ່ນກັນ

ຄວນຕ້ອງໃຫ້ມີສິ່ງກີດກັນ (ສຸຕເຣາະຫ໌) ໜ້າອິມາມທີ່ເປັນຜູ້ນຳໃນການລະຫມາດ ຫຼື ຂ້າງໜ້າຜູ້ທີ່ເຮັດການລະຫມາດຄົນດຽວ

ການຫັນໜ້າໄປທາງກິບລັດເປັນເງື່ອນໄຂໃນການເຮັດລະຫມາດ ແຕ່ກໍມີລະນີທີ່ຍົກເວັ້ນ ເຊິ່ງຖືກຂຽນໄວ້ຢ່າງຈັດເຈນໃນຕຳລາຂອງນັກວິຊາການອິສລາມ (ເຊັ່ນ ການປະຕິບັດລະຫມາດໃນຍາມທີ່ຢ້ານກົວ ຫຼື

[1] ບັນທຶກໂດຍ ອັລບຸກໍຣີ, ເລກທີ່ (5782).

ສິງຄາມ
ແລະການລະຫມາດສຸນັດບິນພາການະໃນຂະນະທີ່ເດີນທາງ
ດ້ວຍທີ່ເຮົາບໍ່ຮູ້ທິດຕະເວັນຕົກຢ່າງແນ່ນອນ
ກໍ່ສາມາດເຮັດການລະຫມາດຫັນ
ໜ້າໄປທາງທີ່ເຮົາສະດວກໄດ້)

3. ຕັກບີຣໍຕຸລອິຫ໌ຣອມ

ກ່າວຕັກບີຣພ້ອມສາຍຕາທີ່ເບິ່ງໄປບ່ອນສຸຍູດ (ກົ້ມກາບ) ດ້ວຍຄຳກ່າວວ່າ "ອັລລໍຮຸ ອັກບັຣ" ມີຄວາມໝາຍວ່າ "ອັລລໍຫ໌ຜູ້ຊົງຍິ່ງໃຫຍ່".

4. ຍົກຜ່າມື ທັ້ງສອງຂ້າງຂະນະຕັກບີຣ ກ່າວຄື ຍົກມືທັ້ງສອງຂ້າງຂະນະກ່າວຕັກບີຣ ໃຫ້ສູງລະດັບແຂນໄລ່ ຫຼື ຕິ່ງຫູດ້ວຍການແບ່ນິ້ວມື ທັ້ງໝົດອອກ ແລະ ຫັນຜ່າມືໄປທາງກິບລັດ.

5. ວ່າງມື ທັ້ງສອງຂ້າງບິນໜ້າເອິກ ໃຫ້ວາງຜ່າມືຂວາທັບບິນມື ຊ້າຍ ຫຼື ບ່ອນຂໍ້ມືຊ້າຍ ຫຼື ວ່າງບ່ອນຊ່ວງແຂນຂະນະທີ່ຢືນລະຫມາດ
ເພາະມີລາຍງານຈາກທ່ານນະບີ ຊັລລັລລໍຮຸ ອະໄລຮິ ວະສັລລໍາ.

6. ສຸນັດສິ່ງເສີມໃຫ້ອ່ານດຸອາເປີດລະຫມາດ ອັລ-ອິສຕິພຕາຫ໌ ກໍ່ຄື:

(اللَّهُمَّ بَاعِدْ بَيْنِي وَبيْنَ خَطَايَايَ، كَمَا بَاعَدْتَ بيْنَ المَشْرِقِ وَالمَغْرِبِ، اللَّهُمَّ نَقِّنِي مِنَ الخَطَايَا كَمَا يُنَقَّى الثَّوْبُ الأَبْيَضُ مِنَ الدَّنَسِ، اللَّهُمَّ اغْسِلْ خَطَايَايَ بالمَاءِ والثَّلْجِ والبَرَدِ).

ຄຳອ່ານ: (ອັລລໍຮຸມມະ ບາອິດໄບນີ ວະໄບນະ ຄໍຕໍຍາ ກະມາ ບາອັດຕະ ໄບນັລ ມັຊຣິກິ ວັລມັກຣິບ, ອັລລໍຮຸມມະ ນັກກີນີ

ມີນັລ ຄໍຕໍຍາ ກະມາ ຍຸນັກກໍສ ເສົາບຸລ ອັບຍະດຸ ມີນັດດະນັສ, ອັລລໍຮຸມມັກ ສິລຄໍຕໍຍາຍະ ບິລມາອິ ວັສຊັລຈິ ວັລບະຣໍດີ) ຄວາມໝາຍວ່າ : ໂອ້ອັລລໍຫ໌ ຂໍຊົງແຍກບ່າວໃຫ້ຫ່າງໄກຈາກຄວາມຜິດບຽບດັ່ງ ທີ່ພຣະອົງໄດ້ແຍກທິດຕະເວັນອອກກັບທິດຕະເວັນຕົກ ໂອ້ອັລລໍຫ໌ ຂໍພຣະອົງຊໍາລະລ້າງບ່າວໃຫ້ບໍລິສຸດຈາກບາບ ດັ່ງຜ້າຂາວສະອາດທີ່ຖືກຊໍາລະອອກຈາກສິ່ງສົກກະປົກ

ໂອ້ອັລລໍຫ໌ ໂປດລ້າງບ່າວຈາກຄວາມຜິດທັ້ງຫຼາຍ ດ້ວຍນໍ້າ, ດ້ວຍຫິມະ, ແລະ ນໍ້າລູກເຫັບ[1].

ຫຼື ຖ້າຕ້ອງການທີ່ຈະກ່າວອີກແບບໜຶ່ງແທນກໍ່ໄດ້, ກໍ່ຈົ່ງກ່າວວ່າ:

(سُبْحَانَكَ اللَّهُمَّ وبِحَمْدِكَ، وَتَبَارَكَ اسْمُكَ، وَتَعَالَى جَدُّكَ، ولَا إِلَهَ غَيْرُكَ).

ຄໍາອ່ານ: (ຊູບຮານະ ກັລລໍຮຸມມະ ວະບິຮໍາດິກະ ວະຕະບາຣໍ ກັສມຸກາ ວະຕະອາລາ ຈັດດຸກະ ວະລາອີລາຮະ ກ໋ອຍຣູກະ)

ຄໍາແປ: ມະຫາຄວາມບໍລິສຸດແດ່ພຣະອົງ, ໂອ້ອັລລໍຫ໌ ແລະ ການສັນເສີນທັງຫມົດເປັນຂອງພຣະອົງ, ຄວາມປະເສີດຢູ່ໃນພຣະນາມຂອງພຣະອົງ, ກຽດຂອງພຣະອົງນັ້ນສູງສົ່ງ, ແລະ ບໍ່ມີພຣະເຈົ້າອື່ນໃດນອກຈາກພຣະອົງ”[2], ເມື່ອຜູ້ທີ່ຈະປະຕິບັດການລະຫມາດອ່ານດຸອາ ອັລ-ອິສຕິຟຕະຫ໌ ທີ່ມີສາຍງານ ຈາກທ່ານນະບີ ຊັລລັລລໍຫຸ ອະໄລຮິ ວະສັລລັມ ນອກຈາກສອງບົດດັ່ງທີ່ກ່າວມາຂ້າງຕົ້ນ

[1] ບັນທຶກໂດຍ ອັລບຸກໍຣີ, ເລກທີ່ (744) ແລະ ມຸສລິມ, ເລກທີ່ (598).

[2] ບັນທຶກໂດຍມຸສລິມ, ເລກທີ່ (399).

ກໍ່ຖືວ່າເປັນທີ່ອະນຸຍາດ ແລະ ຈະເປັນການດີຫຼາຍຫາກອ່ານດຸອາ ອັລ-ອິສ ຕິຟຕະຫ໌ ທີ່ບໍ່ຊ້ຳກັນ (ໃນແຕ່ລະຄັ້ງເວລາລະຫມາດ) ເພາະເປັນການປະຕິບັດຕາມສຸນນະຫ໌ຢ່າງສົມບູນ ຈາກນັ້ນໃຫ້ອ່ານຫຼັງຈາກດຸອາ ອັລ-ອິສຕິຟຕະຫ໌ ວ່າ: ອະອູຊຸ ບິລລາຮິ ມິນັຊ ໄຊ ຕອນ ນິຣຣໍຈີມ, ບິສມິລລາ ຫີຣ ເຣາະຫ໌ມານ ນິຣ ຣໍຫີມ, ແລ້ວອ່ານສູເຣາະຫ໌ ອັລ-ຟາຕິຫະຫ໌ ເພາະຈາກຄໍາເວົ້າຂອງທ່ານນະບີ ຊໍລລັລລໍຫຸ ອະລັຍຮິ ວະສັລລັມ ທີ່ກ່າວໄວ້ວ່າ:

(لَا صَلَاةَ لِمَنْ لَمْ يَقْرَأْ بِفَاتِحَةِ الكِتَابِ).

ຄວາມໝາຍວ່າ: ການລະຫມາດຈະບໍ່ຖືກຕອບຮັບ ສໍາລັບຜູ້ໃດທີ່ບໍ່ໄດ້ ອ່ານສູເຣາະຫ໌ ອັລ-ຟາຕິຫະຫ໌[1]. ຫຼັງຈາກອ່ານສູເຣາະຫ໌ ອັລ-ຟາຕິຫະຫ໌ ເສັດຮຽບຮ້ອຍແລ້ວກໍ່ຈົ່ງກ່າວວ່າ: "ອາມີນ" ເຊິ່ງມີຄວາມໝາຍວ່າ: "ຂໍພຣະອົງອັລລໍຫ໌ຊົງຕອບຮັບ ດ້ວຍເຖີດ" ອ່ານສຽງດັງໃນການລະຫມາດທີ່ອ່ານສຽງດັງ (ຄື ມັກຣິບ, ອີຊາ, ແລະ ຊຸບຮິ) ແລະ ອ່ານດ້ວຍສຽງເບົາໃນການລະຫມາດທີ່ອ່ານບໍ່ສຽງດັງ (ຄື ຊຸຫ໌ຣິ, ແລະ ອັສຣິ) ແລະ ອ່ານຫຼັງຈາກນັ້ນຕາມດ້ວຍອາຍະຫ໌ອັລກຸຣອານທີ່ທ່ານສະດວກຈະອ່ານ ຈະເປັນການທີ່ດີສຸດຖ້າຫາກອ່ານສູເຣາະຫ໌ທີ່ມີຄວາມຍາວປານກາງ (ເອົາ-ສັດ ອັລ-ມຸຟັສສອລ) ໃນການລະຫມາດຊຸບຮິ

---

[1] ບັນທຶກໂດຍອັລບຸກໍຣີ : ເລກທີ່ (756).

(ຕອນເຊົ້າ), ແລະ ອ່ານສູເຣາະຫ໌ທີ່ຍາວ ແລະ ສັ້ນ (ກິສອສ ອັລ-ມູຟັສສອລ) ໃນບາງຄັ້ງໃນການລະຫມາດມັກຣິບ ນັ້ນຄື ການປະຕິບັດຕາມຫະດີຊທີ່ມີສາຍລາຍງານຈາກທ່ານນະບີ ຊັລລັລລໍຫູ ອະລັຍຮິ ວະສັລ ລັມ.

7. ກົ້ມຣູກົວະ ພ້ອມກ່າວຕັກບີຣ

ຍົກມື ທັ້ງສອງຂ້າງໃຫ້ຢູ່ໃນລະດັບຫົວໄລ ຫຼື ຕິ່ງຫູ ພ້ອມກ່າວຕັກບີຣເພື່ອກົ້ມຣູກົວະ ໃຫ້ຫົວຕັ້ງກົງກັບແຜ່ນຫຼັງ ແລະ ວ່າງມືທັ້ງສອງຂ້າງເຖິງຫົວເຂົ່າໂດຍນິ້ວມືແຍກອອກຈາກກັນ ໃຫ້ມີຕຸມັນນີນະຫ໌ (ສະມາທິ ຫຼື ການເວັ້ນຊ່ວງໃຫ້ດົນພໍປະມານ) ໃນການຣູກົວະ ແລະ ກ່າວວ່າ:

(سُبْحَانَكَ اللَّهُمَّ وَبِحَمْدِكَ، اللَّهُمَّ اغْفِرْ لِي).

ຄໍາອ່ານ : "ຊຸບຮານະ ກັລລໍຮຸມມະ ວະບິຮໍາດິກະ ອັລລໍຮຸມມະ ມັກຟິຣລີ"

ຄວາມໝາຍວ່າ: ມະຫາບໍລິສຸດແດ່ພຣະອົງ ໂອ້ອັລລໍຫ໌ພຣະຜູ້ອະພິບານຂອງພວກເຮົາ ແລະ ດ້ວຍການສັນລະເສີນແດ່ພະອົງ ໂອ້ອັລລໍຫ໌ໂປດປະທານອະໄພຍະໂທດແກ່ຂ້ອຍດ້ວຍເຖີດ[1].

8. ເງີຍຫນ້າຂຶ້ນຈາກການຣູກົວະ

ໃຫ້ຍົກມື ທັ້ງສອງຂ້າງໃຫ້ຢູ່ໃນລະດັບຫົວໄຫລ ຫຼື ຕິ່ງຫູ ພ້ອມກ່າວຕັກບີຣຂະນະເງີຍຫົວຂຶ້ນ ຈາກການຣູກົວະ ພ້ອມກ່າວວ່າ: "ສາມິອັລລໍຮຸ ລິມັນຮາ ມິດະຫ໌"

---

[1] ບັນທຶກໂດຍ ອັລບຸກໍຄໍຣີ, ເລກທີ່ (817) ແລະ ມຸສລິມ, ເລກທີ່ (484).

ຄວາມໝາຍວ່າ: ອັລລໍຫ໌ຊົງໄດ້ຍິນສໍາຫຼັບຜູ້ທີ່ສັນລະເສີນພຣະອົງ ໃຫ້ກ່າວເມື່ອເປັນອິມາມນໍາລະຫມາດ ຫຼື ເມື່ອລະຫມາດຄົນດຽວ ຕອນຍືນກົງ ໃຫ້ກ່າວວ່າ:

(رَبَّنَا ولَكَ الحَمْدُ حَمْدًا كَثِيرًا طَيِّبًا مُبَارَكًا فِيهِ مِلْءَ السَّمَواتِ ومِلْءَ الأَرضِ، ومِلْءَ ما شِئتَ مِن شيءٍ بَعدُ).

"ຣອບບະນາ ວະລາກັລຮໍາ ຮໍາດັນ ກະຊີຣອນ ຕ໋ອຍຢິບັນ ມູບາຣໍກັນ ຟີຮີ ມີລອັສສາມາ ວາຕີ ວະມີລອັລອັຣ ວະມີລອະ ມາຊີຕະ ມິນໄຊອິນ ບະດະຫ໌"

ຄວາມໝາຍວ່າ: ໂອ້ພະຜູ້ອະພິບານແຫ່ງພວກເຮົາ ຂໍສັນລະເສີນແດ່ພຣະອົງ ດ້ວຍການສັນລະເສີນທີ່ທັ້ງຫຼາຍທີ່ດີ ແລະ ປະເສີດ ໃຫ້ເຕັມທັ້ງຟາກຟ້າ ແລະ ແຜ່ນດິນ, ແລະ ສິ່ງທີ່ຢູ່ໃນລະຫວ່າງທັ້ງສອງ ແລະ ເຕັມທຸກສິ່ງທີ່ພຣະອົງປະສົງນອກເໜືອຈາກນັ້ນ[1].

ສໍາຫຼັບມະມູມເຊິ່ງເປັນຜູ້ຕາມ ໃຫ້ກ່າວໃນຂະນະເງີຍໜ້າຂຶ້ນຈາກຣູກົວະດ້ວຍດຸອາຂ້າງຕົ້ນເຊັ່ນກັນ , ຖ້າຫາກຈະກ່າວເພີ່ມເຕີມທັ້ງຕອນເປັນອິມາມ ຫຼື ລະຫມາດຄົນດຽວວ່າ:

(أَهْلَ الثَّنَاءِ والمَجْدِ، أَحَقُّ مَا قَالَ العَبْدُ، وكُلُّنَا لَكَ عَبْدٌ: اللَّهُمَّ لَا مَانِعَ لِمَا أَعْطَيْتَ، ولَا مُعْطِيَ لِمَا مَنَعْتَ، ولَا يَنْفَعُ ذَا الجَدِّ مِنْكَ الجَدُّ).

"ອະຫ໌ລຸສ ສະນາອີ ວັລມະຈັດ ອະຮັກກຸມາ ກໍລັລອັບດຸ ວະກຸລລານາ ລະກະອັບ , ອັລລໍຮຸມມະ ລາມານີອະ ລີມາ

---

[1] ບັນທຶກໂດຍ ອັລບຸກໍຄໍຣີ, ເລກທີ່ (711) ແລະ ມຸສລິມ, ເລກທີ່ (598).

ອະຕ່ອຍຕະ ອະລາມ້ອະ ຕີຍາລີມາ ມານະຕະ ອະລາມ້ອະ ຕີຍະລີມາ ມານະຕາ ອະລາ ຍັນພະອຸ ຊັລຈັດດິ ມິນກັລຈັດດຸ"

ຄວາມໝາຍວ່າ: ພຣະອົງຜູ້ເປັນເຈົ້າຂອງການສັນລະເສີນ ແລະ ຄວາມຍິ່ງ ໃຫຍ່ ສິ່ງທີ່ບ່າວຄວນກ່າວຫຼາຍທີ່ສຸດ ເຊິ່ງພວກເຮົາທັ້ງຫຼາຍລ້ວນເປັນບ່າວຂອງພຣະອົງ ໂອ້ອັລລໍຫ໌ພຣະຜູ້ອະພິບານແຫ່ງເຮົາ ບໍ່ມີຜູ້ໃດຫ້າມໄດ້ໃນສິ່ງທີ່ພຣະອົງຊົງປະທານ ແລະ ບໍ່ມີຜູ້ໃດໃຫ້ໄດ້ໃນສິ່ງທີ່ພຣະອົງຊົງຫ້າມໄວ້ ແລະ ຄວາມລ່ຳລວຍ/ອຳນາດຂອງຜູ້ໃດ ບໍ່ອາດອຳນວຍຜົນແກ່ຜູ້ຄົນນັ້ນຕໍ່ໜ້າພຣະອົງ (ຫຼື ຈາກການລົງໂທດຂອງພະອົງ) ໄດ້[1]. ການອ່ານດຸອາຂ້າງຕົ້ນຈະເປັນສິ່ງທີ່ດີຫຼາຍ ເນື່ອງຈາກມີລາຍງານຈາກ ທ່ານນະບີ ຊໍລລັລລໍຫຸ ອະລັຍຮິ ວະສັລລັມ

ແລະ ສຸນັດໃຫ້ວ່າງມື ທັ້ງສອງຂ້າງເຖິງໜ້າອົກ ໂດຍທີ່ມືຂວາທັບມືຊ້າຍ ກ່າວຄື ເຮັດຄືກັບຂະນະຍືນກົ່ງກ່ອນທີ່ຈະກົ້ມຣູກົວະ ເພາະມີສາຍລາຍງານຈາກທ່ານນະບີ ຊັລລັລລໍຫຸ ອະໄລຮິ ວະສັລລັມ ຈາກຫະດີຊ ວາອິລ ບິນ ຮາຈັຣ ແລະ ສະຫັລ ບິນ ສະອັດ ຣໍດີຍັລລໍຫຸ ອັນຮຸມາ.

9. ລົງສຸຍູດກົ້ມກາບພ້ອມກ່າວຕັກບີຣ

ຫາກເປັນການສະດວກໃຫ້ເອົາຝ່າມືທັ້ງສອງລົງກ່ອນຫົວເຂົ່າ ແລະ ນິ້ວມືກັບນິ້ວຕີນຍັນກັບພື້ນ ພ້ອມຫັນທັ້ງນິ້ວມື ແລະ ນິ້ວຕີນໄປທາງກິບລັດໃນຂະນະສຸຍູດ

---

[1] ບັນທຶກໂດຍມຸສລິມ, ເລກທີ່ (477).

ໃຫ້ຍຶດເອົາວ່າອະໄວຍະວະທັ້ງເຈັດຕ້ອງສຳຜັດກັບພື້ນທີ່ຈະສຸຍູດ ຄື ໜ້າຜາກກັບຫູດັງ, ຝ່າມືທັ້ງສອງຂ້າງ, ຫົວເຂົ່າທັ້ງສອງຂ້າງ, ແລະ ນິ້ວຕີນທັ້ງສອງຂ້າງ ໃຫ້ກ່າວຂະນະສຸຍູດ ວ່າ: "ຊຸບນາບະຮອບບີ ຍັລອະລາ" ຄວາມໝາຍວ່າ: ມະຫາບໍລິສຸດແດ່ພຣະຜູ້ອະພິບານຂອງຂ້ອຍຜູ້ສູງສົ່ງ, ຈະເປັນການດີຖ້າຫາກອ່ານສາມຄັ້ງ ຫຼືຫຼາຍກວ່ານັ້ນ ແລະ ສຸນັດໃຫ້ກ່າວພ້ອມດຸອາດັ່ງນີ້ ຄື :

(سُبْحانَكَ اللَّهُمَّ رَبَّنا وبِحَمْدِكَ، اللَّهُمَّ اغْفِرْ لِي).

ຄຳອ່ານ : "ຊຸບຮານະກັລລໍຮຸມມະ ຣະບີຮ້າດີກະ ອັລລໍຮຸມມະ ມັກພີຣລີ"

ຄວາມໝາຍວ່າ: ມະຫາບໍລິສຸດແດ່ພຣະອົງ ໂອ້ອັລລໍຫ໌ພຣະຜູ້ອະພິບານຂອງພວກເຮົາ ແລະ ດ້ວຍການສັນລະເສີນແດ່ພະອົງ ໂອ້ອັລລໍຫ໌ໂປດປະທານອະໄພຍະໂທດແກ່ຂ້ອຍດ້ວຍເຖີດ, ຄວນມີການຂໍດຸອານີ້ໃຫ້ຫຼາຍ ໆ ໃນຂະນະສຸຍູດ ເນື່ອງຈາກຫະດີຊທ່ານ ນະບີ ຊັລລັລລໍຫຸ ອະລັຍຮິ ວະສັລລັມ ໄດ້ກ່າວວ່າ:

(أَمَّا الرُّكُوعُ، فَعَظِّمُوا فِيهِ الرَّبَّ، وَأَمَّا السُّجُودُ، فَاجْتَهِدُوا فِي الدُّعَاءِ، فَقَمِنٌ أَنْ يُسْتَجَابَ لَكُمْ).

ຄວາມໝາຍວ່າ: "ເມື່ອການກົ້ມຮູກົວະ ພວກທ່ານຈົ່ງກ່າວຍ້ອງຍໍເຖິງຄວາມຍິ່ງໃຫຍ່ຂອງອັລລໍຫ໌ ແລະ ເມື່ອຮອດສຸຍູດ ພວກທ່ານຈົ່ງພະຍາຍາມຂໍດຸອາໃຫ້ຫຼາຍໆ ເພາະນັ້ນຄື ຊ່ວງທີ່ດີທີ່ສຸດຂອງການຂໍ ເພາະ

ອັລລໍຫ໌ຈະຕອບຮັບຈາກພວກທ່ານ[1].

ໃຫ້ຂໍແຕ່ຄວາມດີງາມທັ້ງໂລກນີ້ ແລະ ໂລກໜ້າຈາກພຣະອົງອັລລໍຫ໌ທັ້ງໃນ ການລະຫມາດຟັຣດູ ແລະ ລະຫມາດສຸນັດ ໃນຂະນະສຸຍູດ ທ່ານຈົ່ງຢຶດແຂນໃຫ້ຫ່າງຈາກລຳຕົວ ໜ້າທອງ ແລະ ສະໂພກ, ແລະ ໃຫ້ສະໂພກຫ່າງຫຼື ແຍກອອກຈາກຂາ ພ້ອມກັບຍົກແຂນໃຫ້ຂຶ້ນເໜືອພື້ນ ດັ່ງຄຳກ່າວຂອງທ່ານນະບີ ຊັລລັລລໍຮຸ ອະໄລຮີ ວະສັລລັມ:

(اعْتَدِلُوا فِي السُّجُودِ، ولَا يَبْسُطْ أَحَدُكُمْ ذِرَاعَيْهِ انْبِسَاطَ الكَلْبِ).

ຄວາມໝາຍວ່າ: "ທ່ານຈົ່ງສຸຍູດໃຫ້ດີພໍປານກາງ (ບໍ່ນອນລາບ ແລະ ບໍ່ງໍໂຕ) ແລະ ຫ້າມບຸກຄົນໃດວາງແຂນຂອງລາວບົນພື້ນເຊັ່ນດັ່ງກັບຫມາແຮັດ"[2].

10. ຍົກຫົວຂຶ້ນພ້ອມກ່າວຕັກບີຣ

ເມື່ອລຸກຂຶ້ນຈາກສຸຍູດໃຫ້ນັ່ງທັບເຖິງຕີນຊ້າຍທີ່ວາງພັບເຖິງພື້ນ ແລະ ໃຫ້ຕີນ ຂວາຍັນກັບພື້ນ ແລະ ນຳມືໄປວາງເຖິງຫົວເຂົ່າ ແລະ ຕົ້ນຂາທັ້ງສອງຂ້າງ ແລະ ໃຫ້ກ່າວວ່າ:

(رَبِّ اغْفِرْ لِي وَارْحَمْنِي وَاهْدِنِي وَارْزُقْنِي وَعَافِنِي وَاجْبُرْنِي).

"ຣອບບິກ ພີຣລີ ວັຣຮັມນີ ວະຫ໌ດີນີ ວັຣຊຸກນີ ວະອາຟີນີ ວັຈບຸຣນີ"

ຄວາມໝາຍວ່າ: ໂອ້ ອັລລໍຫ໌

---

[1] ບັນທຶກໂດຍມຸສລິມ, ເລກທີ່ (479).

[2] ບັນທຶກໂດຍ ອັລບຸກໍຣີ, ເລກທີ່ (788) ແລະ ມຸສລິມ, ເລກທີ່ (493).

ຂໍຊົງໂປດໃຫ້ການອະໄພຍະໂທດແກ່ຂ້ອຍ ຂໍຊົງໂປດເມດຕາຂ້ອຍ ຂໍຊົງໃຫ້ການຊີ້ນໍາແກ່ຂ້ອຍ ຂໍຊົງໂປດປະທານປັດຈັຍຍັງຊີບແກ່ຂ້ອຍ ຂໍພຣະອົງໂປດຄຸ້ມຄອງຂ້ອຍ ແລະ ຊົງປະທານຄວາມລໍ່າລວຍໃຫ້ຂ້ອຍດ້ວຍທອນ[1]. ແລະ ໃຫ້ມີ ຕຸມະນີນະຫ໌ (ສະມາທິ ຫຼື ການເອັ້ນຊ່ວງໃຫ້ດິນພໍປະມານ) ໃນການນັ່ງ

ສຸຍູດການຄັ້ງສຸດທ້າຍ

ໃຫ້ກ່າວຕັກບີຣຂະນະລົງສຸຍູດ ແລະ ປະຕິບັດໃຫ້ຄື ກັບການສຸຍູດໃຫ້ຄັ້ງທໍາອິດ.

12. ເງີຍຫົວຂຶ້ນຈາກການສຸຍູດພ້ອມກ່າວຕັກບີຣ

ເມື່ອເງີຍຫົວຂຶ້ນຈາກສຸຍູດ ໃຫ້ນັ່ງແບບໜຶ່ງ ນັ່ງຄືກັບການນັ່ງລະວ່າງສອງສຸຍູດເຊິ່ງເອີ້ນວ່ານັ່ງພັກ ມັນຄືສຸນັດຖ້າຫາກບໍ່ປະຕິບັດເຊັ່ນນີ້ກໍ່ຖືວ່າບໍ່ໜ້າກຽດ ແລະ ບໍ່ມີການຊິກິຣ ຫຼື ດຸອາໃດໆໃນຂະນະນັ່ງພັກ ເສັດແລ້ວໃຫ້ລຸກຂຶ້ນລະຫມາດຣົກະອັດທີ່ສອງ ໃຫມ່ ຈັບທີ່ຫົວເຂົ່າຂະນະລຸກຂຶ້ນຢືນຫາກເປັນການສະດວກ, ແຕ່ຖ້າຫາກລໍາບາກກໍ່ໃຊ້ມືດັນກັບພື້ນ, ເມື່ອຢືນກົງແລ້ວໃຫ້ອ່ານ ສູເຣາະຫ໌ ອັລ-ຟາຕິຫະຫ໌ ແລະ ຕາມດ້ວຍອາຍະຫ໌ທີ່ສະດວກທີ່ຈະອ່ານ ໃຫ້ປະຕິບັດຄືກັບຣົກະອັດທໍາອິດ.

13. ກໍລະນີລະຫມາດສອງຣົກະອັດ

ການລະຫມາດທີ່ມີ 2 ຣົກະອັດ ເຊັ່ນ ລະຫມາດຊຸບຮີ

---

[1] ບັນທຶກໂດຍ ອັດຕິຣມີຊີ ເລກທີ່ (284), ແລະ ອະບູ ດາວູດ ເລກທີ່ (850), ແລະ ອິບນຸ ມາຈະຫ໌ ເລກທີ່ (898).

ລະຫມາດວັນສຸກ, ລະຫມາດວັນອີດ ວິທີນັ່ງຫຼັງຈາກລຸກຂຶ້ນຈາກການສຸຍູດຄັ້ງທີ່ສອງ
ໃຫ້ນັ່ງບົນຕີນຊ້າຍທີ່ສຽບເຂົ້າໄປວາງໃຕ້ສະໂພກ ແລະ ໃຫ້ຕີນຂວາຍັນກັບພື້ນ,
ນໍາມືຂວາໄປວາງເຖິງຂາຂວາພ້ອມກັບກໍານິ້ວມືທັງໜົດຍົກເວັ້ນນິ້ວຊີ້ ແລະ ຊີ້ນີ້ວຊີ້ເພື່ອເປັນສັນຍະລັກແຫ່ງຄວາມເປັນເອກະພາບຂອງພຣະອົງອັລລໍຫ໌,

ຈະເປັນການດີຫຼາຍຫາກກໍານິ້ວກ້ອຍ ແລະ ນິ້ວກາງ ແລະໃຫ້ຫົວແມ່ມືຕໍ່ກັນເປັນວົງກັບນິ້ວກາງ ແລະ ຊີ້ດ້ວຍນິ້ວຊີ້ ເນື່ອງຈາກການນັ່ງທັ້ງສອງລັກສະນະລ້ວນເປັນການປະຕິບັດຂອງທ່ານນະບີ ຊ໊ລລັລລໍຫຸ ອະໄລຮີ ວະສັລລັມ ທັ້ງນັ້ນ ດັ່ງນັ້ນ ຫາກປະຕິບັດທັ້ງສອງວິທີໂດຍບໍ່ຊໍ້າກັນຈະເປັນສິ່ງທີ່ດີຫຼາຍ ແລະ ໃຫ້ນໍາມືຊ້າຍວາງເຖິງເຂົ່າຂາຂ້າງຊ້າຍ, ໃນຂະນະນັ່ງໃຫ້ອ່ານຕະຊະຮຸດ ຄື :

(التَّحِيَّاتُ لِلهِ وَالصَّلَوَاتُ وَالطَّيِّبَاتُ، السَّلَامُ عَلَيْكَ أَيُّهَا النَّبِيُّ وَرَحْمَةُ اللهِ وَبَرَكَاتُهُ، السَّلَامُ عَلَيْنَا وَعَلَى عِبَادِ اللهِ الصَّالِحِينَ، أَشْهَدُ أَنْ لَا إِلَهَ إِلَّا اللهُ وَأَشْهَدُ أَنَّ مُحَمَّدًا عَبْدُهُ وَرَسُولُهُ).

ຄໍາອ່ານ: ອັດຕະຮີຍາຕຸ ລີລລາຮີ , ວັສ ສໍລາວາຕຸ ວັດຕອຍຍີບາຕຸ , ອັສ ສະລາມຸ ອະໄລກາ ໄອຍູຮັນ ນະບີຍຸ ວະເຣາະມາ ຕຸລລໍຮີ ວະບະເຣາະກາຕຸ , ອັສສະລາມມຸ ອະໄລນາ ວະອະລາ ອີບາດີລລາຮີ ຊໍລີຮີນ ອັຊຮະດຸອັລລາ ອີລາຮະ ອີລລັລລໍຮ໌ , ວະອັຊຮະດຸ ອັນນະ ມຸຮໍາມະດັນ ອັບດຸຮູ ວະເຣາະຊູລຸຮ໌.

ຄຳແປ: (ຄວາມເຄົາລົບ, ຄວາມພັກດີ ແລະຄຸນນະທຳສີລະທັມທັ້ງຫລາຍ ເປັນສິດຂອງອັລລໍຮ໌ (ຫຼືຄວາມພັກດີ ຄືການເຮັດຄວາມດີທາງຄຳເວົ້າ ທາງກິລິຍາມາລະຍາດ ແລະທາງຊັບສິນທັ້ງຫລາຍເປັນສິດທິຂອງອັລລໍຮ໌ທັ້ງຫມົດ)

ຂໍຄວາມສັນຕິສຸກ ຄວາມເມດຕາແຫ່ງອັລລໍຮ໌ ແລະຄວາມຈະເລີນແຫ່ງພຣະອົງຈົ່ງມີແດ່ທ່ານ ໂອ້ທ່ານນາບີ

ຂໍຄວາມສັນຕິສຸກ ຈົ່ງມີແກ່ພວກເຮົາ ແລະ ແກ່ບັນດາບ່າວຜູ້ທີ່ມີຄຸນນະທຳແຫ່ງອັລລໍຮ໌,

ຂ້ອຍຂໍປະຕິຍານຕົນວ່າ ບໍ່ມີພຣະເຈົ້າອື່ນໃດນອກຈາກອັລລໍຮ໌

ແລະ ມຸຮໍາມັດນັ້ນ ເປັນບ່າວ ແລະ ສາດສະດາທູດຂອງພຣະອົງ). ແລະ ກ່າວຕໍ່ອີກວ່າ:

(اللَّهُمَّ صَلِّ عَلَى مُحَمَّدٍ وعَلَى آلِ مُحَمَّدٍ، كَمَا صَلَّيْتَ عَلَى إِبْرَاهِيمَ وَعَلَى آلِ إِبْرَاهِيمَ؛ إِنَّكَ حَمِيدٌ مَجِيدٌ، وَبَارِكْ عَلَى مُحَمَّدٍ وَعَلَى آلِ مُحَمَّدٍ، كَمَا بَارَكْتَ عَلَى إِبْرَاهِيمَ وعَلَى آلِ إِبْرَاهِيمَ؛ إِنَّكَ حَمِيدٌ مَجِيدٌ).

ຄຳອ່ານ: ອັລລໍຮັອຸມມາ ສໍລລິ ອະລາ ມຸຮໍາມັດ ວະອາລາ ອາລິ ມຸຮໍາມັດ ກະມາສໍລໄລຕະ ອະລາ ອິບຣໍຮີມ ວະ ອະລາ ອາລິ ອິບຣໍຮີມ ອິນນະກະ ຮະມີດ ດຸມ ມະຈີດ, ວະບາຣິກ ອະລາ ມຸຮໍາມັດ ວະອະລາ ອາລິ ມຸຮໍາມັດ ກະມາ ບາຣັອກຕະ ອະລາ ອິບຣໍຮີມ ວະອະລາ ອາລິ ອິບຣໍຮີບ ອິນນະກະ ຮະມີດຸນ ມະຍິດ.

ຄຳແປ : ໂອ້ ອັລລໍຮ໌ ໂດ້ໂປຼດເມດຕາ (ຫຼື ສັນລະເສີນຍົກຍ້ອງ) ມຸຮໍາມັດ ແລະ ບໍລິວານຕະກູນຂອງມຸຮໍາມັດ ຄືດັ່ງທີ່ໃຫ້ການສັນລະເສີນແກ່

ອິບຣໍຮີມ ແລະ ຄອບຄົວຂອງອິບຣໍຮີມ,

ໂອ້ ອັລລໍຮ໌ ຂໍພຣະອົງໄດ້ໃຫ້ເພີ່ມຄວາມຈະເລີນໃຫ້ແກ່ມຸຮໍາມັດ ແລະ ບໍລິວານຕະກູນຂອງມຸຮໍາມັດ ຄືດັ່ງທີ່ໃຫ້ຄວາມຈະເລີນໃຫ້ແກ່ອິບຣໍຮີມ ແລະ ຄອບຄົວຂອງອິບຣໍຮີມ ແທ້ຈິງພຣະອົງເປັນພຣະເຈົ້າທີ່ຄູ່ຄວນການສັນລະເສີນໃຫ້ກຽດ.[1]

ແລະ ໃຫ້ກ່າວຂໍການຄຸ້ມຄອງຈາກອັລລໍຫ໌ ຈາກ 4 ຄວາມຊົ່ວຮ້າຍ ດັ່ງນີ້

( اللَّهُمَّ إِنِّي أَعُوذُ بِكَ مِن عَذَابِ جَهَنَّمَ، وَمِنْ عَذَابِ القَبْرِ، وَمِنْ فِتْنَةِ المَحْيَا وَالْمَمَاتِ، وَمِنْ شَرِّ فِتْنَةِ المَسِيحِ الدَّجَّالِ) .

ຄໍາອ່ານ : (ອັລລໍຮຸມມະ ອິນນີ ອະອູຊຸ ບິກະ ມິນອະຊາບິ ຈະຮັນນໍາ, ວະມິນ ອະຊາບິລ ກໍອບຣີ, ວະມິນ ຟິຕນະຕິລ ມະຫ໌ຍາ ວະມາມາຕ, ວະມິນ ຊັຣຣິ ຟິຕນະຫ໌ ມະຊີຮິດ ດັດຈານ)

ຄວາມໝາຍ: "ຂ້ອຍຂໍການວິງວອນຈາກພຣະອົງອັລລໍຫ໌ ຂໍຊົງໂປດໃຫ້ຂ້ອຍຫ່າງໄກຈາກການທໍາລະມານໃນນະລົກ ແລະ ຊົງໂປດໃຫ້ຂ້ອຍຫ່າງໄກຈາກການຖືກທໍລະມານໃນຫຼຸມຝັງສົບ ແລະ ຊົງໂປດໃຫ້ຂ້ອຍຫ່າງໄກຈາກຄວາມຫາຍະນະໃນການໃຊ້ຊີວິດ ຄວາມເປັນຢູ່ປະຈຸບັນ ແລະ ຫຼັງຄວາມຕາຍ, ແລະ ຊົງໂປດໃຫ້ຂ້ອຍຫ່າງໄກຈາກຄວາມຫາຍະນະຊົ່ວຮ້າຍຟິຕນະຫ໌

[1] ບັນທຶກໂດຍ ອັລບຸກໍອີ, ເລກທີ່ (797) ແລະ ມຸສລິມ, ເລກທີ່ (402).

ຂອງດັດຈານ" [1].

ໃຫ້ກ່າວຕາມດ້ວຍ ດຸອາ ຂໍຄວາມໂຊກດີມີໄຊ ທັ້ງໂລກນີ້ ແລະ ໂລກຫນ້າ ຕາມຄວາມປະສົງຕ້ອງການ, ຫາກດຸອາ ໃຫ້ແກ່ພໍ່ແມ່ ຫຼື ຜູ້ອື່ນທີ່ເປັນມຸສລິມນັ້ນອະນຸຍາດໃຫ້ເຮັດໄດ້ ທັ້ງໃນລະຫມາດຟັຣດູ (ພາກບັງຄັບ) ແລະ ລະຫມາດສຸນນະຫ໌ (ຕາມໃຈສະຫມັກ) ເນື່ອງດ້ວຍຄຳກ່າວຂອງທ່ານນະບີ (ຊລ) ຈາກຫະດີຊຂອງທ່ຣນມັສອູດ ຣໍດີຍັລລໍຮຸ ອັນຮຸ ເມື່ອຄັ້ງທີ່ທ່ານຖືກສອນໃນເລື່ອງການນັ່ງຕະຊາຮຸດ:

(ثُمَّ لِيَتَخَيَّرْ مِنَ الدُّعَاءِ بَعْدُ أَعْجَبَهُ إِلَيْهِ فَيَدْعُو).

( ໃຫ້ເລືອກສະລັບໄປມາຈາກດຸອາທີ່ທ່ານປະທັບໃຈ ແລະ ໃຫ້ເລືອກດຸອາຕາມທີ່ທ່ານມັກດຸອາ)[2]. ແລະ ໃນລາຍງານຫະດີຊບົດອື່ນ:

(ثُمَّ لِيَخْتَرْ مِنَ الْمَسْأَلَةِ مَا شَاءَ).

(ໃຫ້ເລືອກຂໍພອນໃນສິ່ງທີ່ທ່ານຕ້ອງການ ສິ່ງທີ່ເປັນປະໂຫຍດຕໍ່ຕົນເອງ ຕາມສະດວກ)[3].

ແລະ ກວມເອົາທັ້ງສິ່ງເປັນປະໂຫຍດຕໍ່ບ່າວທັ້ງຫມົດທັ້ງໃນໂລກນີ້ ແລະ ໂລກຫນ້າ. ຫຼັງຈາກແລ້ວຈາກການຂໍດຸອາຂໍພອນ ໃຫ້ຫັນໃບຫນ້າໄປທາງ ຂວາ ແລະ ຊ້າຍ ພ້ອມກ່າວສະລາມວ່າ : "ອັສສະລາມມຸ ອະໄລກຸມ ວະຣອາະມາຕຸລລໍຫ໌"

14. ກໍລະໜີລະຫມາດສາມ ຫຼື ສີ່ຣົກະອັດ

---

[1] ບັນທຶກໂດຍ ອັລບຸກໍຄໍຣີ, ເລກທີ່ (1311) ແລະ ມຸສລິມ, ເລກທີ່ (588).

[2] ບັນທຶກໂດຍ ອັນນະສາອີ , ເລກທີ່ (1298).

[3] ບັນທຶກໂດຍມຸສລິມ, ເລກທີ່ (402).

ການລະຫມາດທີ່ມີ 3 ຣໍກະອັດ ເຊັ່ນ ລະຫມາດມັກຣິບ ຫຼື ການລະມາດທີ່ ມີ 4 ຣໍກະອັດ ເຊັ່ນ ລະຫມາດຊຸຫ໌ຣິ ລະຫມາດອັສຣິ ແລະ ລະຫມາດອິຊາ ໃຫ້ອ່ານຕະຊະຮຸດຄັ້ງທຳອິດຄືກັບທີ່ເຮົາໄດ້ອະທິບາຍແລ້ວຂ້າງຕົ້ນ ພ້ອມກັບຂໍພອນ (ສໍລະວາດ) ໃຫ້ກັບທ່ານນະບີ ຊັລລັລລໍຫຸ ອະລັຍຮິ ວະສັລລັມ

ເມື່ອເສັດສິ້ນແລ້ວໃຫ້ລຸກຂຶ້ນຢືນດ້ວຍການນຳມືທັ້ງສອງຂ້າງຈັບໄປທີ່ຫົວເຂົາຂະນະລຸກຂຶ້ນ ແລະ ຍົກມືທັ້ງສອງຂ້າງໃຫ້ຢູ່ລະດັບຫົວໄຫລ ຫຼື ຕິ່ງຫູຂະນະຢືນກົງພ້ອມກັບການກ່າວຕັກບີຣ "ອັລລໍຮຸ ອັກບັຣ"

ຫຼັງຈາກນັ້ນໃຫ້ວາງມືທັ້ງສອງເຖິງໜ້າອົກ ດັ່ງທີ່ໄດ້ສອນໄວ້ແລ້ວຕອນຕົ້ນ ແລະ ອ່ານສູເຣາະຫ໌ ອັລ-ຟາຕິຫະຫ໌ ຢ່າງດຽວໃນຣໍກະອັດທີ່ສາມ ແລະ ສີ່

ຖ້າອ່ານອາຍະຫ໌ອື່ນ ຫຼື ສູເຣາະຫ໌ອື່ນເພີ່ມຫຼັງຈາກ ອັລ-ຟາຕິຫະຫ໌ ໃນຣໍກະອັດທີ່ສາມ ແລະ ສີ່ ໃນການລະຫມາດຊຸຫຣິ ເປັນບາງຄັ້ງບາງຄາວກໍ່ຖືເປັນທີ່ອະນຸຍາດໃຫ້ເຮັດໄດ້ ເນື່ອງຈາກມີສາຍລາຍງານບົ່ງບອກກ່ຽວກັບເລື່ອງດັ່ງກ່າວຈາກຫະດີຊ ຂອງອາບູ ສະອີດ ຣໍດິຍັລລໍຮຸ ອັນຮຸ

ໃຫ້ນັ່ງອ່ານຕະຊະຫຸດສຸດທ້າຍ (ຄັ້ງທີ່ສອງ) ໃນຣໍກະອັດທີ່ສາມສຳລັບລະຫມາດມັກຣິບ ແລະ ໃຫ້ນັ່ງອ່ານຕະຊະຫຸດສຸດທ້າຍໃນຣໍກະອັດທີ່ສີ່ ສຳຫຼັບລະຫມາດຊຸຫ໌ຣິ ອັສຣິ ແລະ ອີຊາ ຄືກັບການກ່າວໃນລະຫມາດສອງຣໍກະອັດດັ່ງທີ່ໄດ້ອະທິບາຍໄວ້ແລ້ວຂ້າງຕົ້ນ

ແລະ ເມື່ອເສັດສິ້ນຈາກການອ່ານຕະຊະຮຸດສຸດທ້າຍແລ້ວ ກໍ່ໃຫ້ສະລາມຫັນໄປທາງຂວາກ່ອນ ແລະ ຕາມດ້ວຍຫັນໄປຂ້າງຊ້າຍ,

ສິ່ງທີ່ເປັນສຸນັດ (ສິ່ງເສີມ) ໃຫ້ກ່າວຫຼັງລະຫມາດ

- ການຂໍອະໄພອະຍະໂທດຈາກອັລລໍຫ໌ 3 ຄັ້ງຄື: "ອັສຕັກຟິຣຸລລໍຫ໌" ແລະ ກ່າວດຸອາອີກຄື:

(اللَّهُمَّ أَنْتَ السَّلَامُ وَمِنْكَ السَّلَامُ، تَبَارَكْتَ يا ذَا الجَلَالِ وَالإِكْرَامِ).

(ອັລລໍຮຸມມະ ອັນຕັສສະລາມ ວະມິນກັສສະລາມ, ຕະບາຣອກຕະ ຢາຊັລຈະລາ ລິວັລອິກຣອມ)[1].

ຄວາມໝາຍວ່າ:

"ຂ້າພະເຈົ້າຂໍວິງວອນຈາກພຣະອົງອັລລໍຫ໌ ພຣະອົງຄືຄວາມສັນຕິສຸກ, ຄວາມສັນຕິທັ້ງຫຼາຍມາຈາກພຣະອົງ ພຣະອົງຊົງເປັນຜູ້ທີ່ປະເສີດ ໂອ້ ພຣະອົງຊົງເປັນຜູ້ຄອບຄອງທັ້ງຄວາມຍິ່ງໃຫຍ່ ແລະ ກຽດຕິຍົດ ອິມາມຈະກ່າວດຸອານີ້ ກ່ອນທີ່ຈະຫັນໜ້າໄປທາງມະຫ໌ມູມ:

(لا إِلَهَ إِلَّا اللهُ وَحْدَهُ لا شَرِيكَ لَه، لَهُ المُلْكُ، ولَهُ الحَمْدُ، وَهُوَ عَلَى كُلِّ شَيءٍ قَدِيرٌ، لَا حَوْلَ وَلَا قُوَّةَ إِلَّا بِاللهِ، اللَّهُمَّ لَا مَانِعَ لِمَا أعْطَيْتَ، ولَا مُعْطِيَ لِمَا مَنَعْتَ، وَلَا يَنْفَعُ ذَا الجَدِّ مِنْكَ الجَدُّ، لَا إِلَهَ إِلَّا اللهُ، وَلَا نَعْبُدُ إِلَّا إِيَّاهُ، لَهُ النِّعْمَةُ وَلَهُ الفَضْلُ، وَلَهُ الثَّنَاءُ الحَسَنُ، لَا إِلَهَ إِلَّا اللهُ مُخْلِصِينَ لَهُ الدِّينَ وَلَو كَرِهَ الكَافِرُونَ).

ຄວາມໝາຍ: "ບໍ່ມີພຣະເຈົ້າອື່ນໃດນອກຈາກອັລລໍຫ໌

[1] ບັນທຶກໂດຍມຸສລິມ, ເລກທີ່ (591).

ພຽງພຣະອົງດຽວ ບໍ່ມີພາຄີໃດໆ ຄວບຄູ່ກັບພຣະອົງ ອຳນາດເປັນຂອງພຣະອົງ, ພຣະອົງມີເດຊານຸພາບເໜືອທຸກສິ່ງ ໂອ້ອັລລໍຫ໌ ພຣະຜູ້ອະພິບານແຫ່ງເຮົາ ບໍ່ມີຜູ້ໃດຫ້າມໄດ້ໃນສິ່ງທີ່ພຣະອົງຊົງປະທານ ແລະ ບໍ່ມີຜູ້ໃດໃຫ້ໄດ້ໃນສິ່ງທີ່ພຣະອົງຊົງຫ້າມໄວ້ ແລະຄວາມລ່ຳລວຍ ອຳນາດຂອງຜູ້ໃດບໍ່ອາດອຳນວຍຜົນແກ່ຜູ້ຄົນນັ້ນຕໍ່ໜ້າພຣະອົງ (ຫຼື ຈາກການລົງໂທດຂອງພຣະອົງ)ໄດ້ ບໍ່ມີຄວາມສາມາດ ແລະ ພຣະລັງອຳນາດໃດໆ ນອກຈາກພຣະອົງອັລລໍຫ໌ ແລະ ບໍ່ມີການເຄົາລົບພັກດີອື່ນໃດນອກຈາກພຣະອົງ, ພຣະອົງຊົງສິດທິໃນການປະທານ ຄວາມສິດທິໃນຄວາມປະເສີດ ຊົງສິດທິໃນການສັນລະເສີນທີ່ດີງາມ ບໍ່ມີພຣະເຈົ້າອື່ນໃດນອກຈາກພຣະອົງ ດ້ວຍຄວາມບໍລິສຸດໃນໃຈ ການເຊີດຊູສາສະໜາຂອງພຣະອົງ ເຖິ່ງວ່າບັນດາຄົນກາຟີຣ (ຜູ້ປະຕິເສດ) ຈະກຽດຊັງບໍ່ມັກເຮົາກໍ່ຕາມ"[1].

ແລະ ການກ່າວຕັສບີຫ໌ຫຼັງລະຫມາດຄື:

- ກ່າວຕັສບີຫ໌ 33 ຄັ້ງ (ຊູບຮານັລລໍຫ໌) ຄວາມໝາຍວ່າ: “ພຣະອົງອັລລໍຫ໌ຊົງບໍລິສຸດທີ່ສຸດ”
- ກ່າວຕະຫ໌ມີດ 33 ຄັ້ງ (ອັລຮໍາດຸລິລລາຫ໌) ຄວາມໝາຍວ່າ:

[1] ບັນທຶກໂດຍມຸສລິມ, ເລກທີ່ (402).

“ການສັນລະເສີນທັງມວນເປັນສິດທິຂອງພະອົງອັລລໍຫ໌”

- ກ່າວຕັກບີຣ 33 ຄັ້ງ

(ອັລລໍຮຸ ອັກບັຣ) ຄວາມໝາຍວ່າ: “ພຣະອົງອັລລໍຫ໌ສົງຍິ່ງໃຫຍ່”

ລວມກັນເປັນ 99 ແລະ ເພີ່ມອີກໜຶ່ງ ເປັນ 100 ກໍຄື: "ລາອິລາຮະ ອິລລັລລໍ ວະຫ໌ດະຮູ ລາຊະຣີກະລະຫ໌ ລະຮຸລມຸລກຸ ວະລາຮູລ ຮໍາດູ ວະຮຸວາ ອະລາ ກຸລລິໄຊ ອິນກໍາດີຣ"

ແລະໃຫ້ອ່ານສາມກູນຄື: ອ່ານສູເຣາະຫ໌ ອັລ-ອິກລາສ, ສູເຣາະຫ໌ ອັລ-ພະລັກ, ແລະ ສູເຣາະຫ໌ ອັລ- ນາສ ສຸນັດໃຫ້ອ່ານສູເຣາະຫ໌ທັ້ງສາມ: 3 ຄັ້ງ ຫຼັງຈາກລະຫມາດຊຸບຮີ ແລະ ຫຼັງລະຫມາດມັກຣິບ ເນື່ອງຈາກມີຫຼາຍຫະດິຊທີ່ລາຍງານເລື່ອງດັ່ງກ່າວຈາກທ່ານນະບີ ຊັລລັລລໍຫຸ ອະລັຍຮີ ວະສັລລັມ.

ລະຫມາດສຸນັດ ອັຣ-ຣໍວາຕິບ

ໄດ້ຖືກບັນຍັດແກ່ມຸສລິມທຸດຄົນໃຫ້ລະຫມາດສຸນັດກ່ອນລະຫມາດຊຸຫ໌ຣີ 4 ຣໍກະອັດ (ລະຫມາດຄັ້ງລະ 2 ຣໍກະອັດ) ຫຼັງຊຸຫ໌ຣີ 2 ຣໍກະອັດ, ລະຫມາດສຸນັດຫຼັງ ມັກຣິບ 2 ຣໍກະອັດ, ລະຫມາດສຸນັດຫຼັງອີຊາ 2 ຣໍກະອັດ, ແລະ ລະຫມາດສຸນັດກ່ອນຊູບຮີ 2 ຣໍກະອັດ, ຣວມທັ້ງໝົດເປັນ 12 ຣໍກະອັດ

ການລະຫມາດສຸນັດ 12 ຣໍກະອັດດັ່ງກ່າວເອີ້ນວ່າ ອັຣ-ຣໍວາຕິບ ເຊິ່ງທ່ານນະບີ ຊັລລັລລໍຫຸ ອະລັຍຮີ ວະສັລລັມ ໄດ້ຮັກສາປະຕິບັດການລະຫມາດສຸນັດດັ່ງກ່າວໃນ ຍາມທີ່ທ່ານອະໄສຢູ່ພູມລໍາເນົາ ແຕ່ເມື່ອທ່ານເດີນທາງ ທ່ານກໍ່ຈະລະຖິ້ມການລະຫມາດສຸນັດດັ່ງກ່າວ ນອກຈາກວ່າລະຫມາດສຸນັດກ່ອນຊູບຮີ ແລະ

ລະຫມາດສຸນັດວິຕິຣ ເຊິ່ງເປັນສິ່ງທີ່ທ່ານນະບີ ຊັລລັລລໍຫຸ ອະລັຍຮີ ວະສັລລັມ ຈະປະຕິບັດມັນເປັນຕະຫຼອດທັ້ງຍາມທີ່ອະໄສຢູ່ພູມລຳເນົາ ແລະ ຍາມເດີນທາງ,

ການລະຫມາດສຸນັດ ອັຣ-ຣໍວາຕິບຢູ່ເຮືອນຈະເປັນສິ່ງທີ່ດີກວ່າ ແຕ່ຖ້າລະຫມາດຢູ່ມັສຍິດກໍ່ສາມາດເຮັດໄດ້ ເພາະຈາກຄຳສອນຂອງທ່ານນະບີ ຊັລລັລລໍຫຸ ອະລັຍຮີ ວະສັລລັມ ກ່າວໄວ້ວ່າ:

(أَفْضَلُ صَلَاةِ المَرْءِ فِي بَيْتِهِ، إِلَّا الصَّلَاةَ المَكْتُوبَةَ).

ຄວາມໝາຍວ່າ: “ການລະຫມາດທີ່ດີປະເສີດສຸດຂອງບຸກຄົນໜຶ່ງນັ້ນ ຄື ປະຕິບັດ ລະຫມາດຢູ່ເຮືອນ ນອກຈາກວ່າການລະຫມາດຟັຣດູ (ພາກບັງຄັບ) ໃຫ້ລະຫມາດຢູ່ມັສຍິດ”[1].

ການຮັກສາລະຫມາດສຸນັດ ອັຣ-ຣໍວາຕິບ 12 ຣົກະອັດໃຫ້ໄດ້ຕະຫຼອດໄປນັ້ນ ເປັນສາເຫດໜຶ່ງເຮັດໃຫ້ໄດ້ເຂົ້າສວນສະຫວັນ ເພາະຈາກຄຳກ່າວຂອງທ່ານນະບີ ຊັລລັລລໍຫຸ ອະລັຍຮີ ວະສັລລັມ ວ່າ:

(مَنْ صَلَّى اثْنَتَيْ عَشْرَةَ رَكْعَةً فِي يَوْمٍ وَلَيْلَةٍ، بُنِيَ لَهُ بِهِنَّ بَيْتٌ فِي الجَنَّةِ).

ຄວາມໝາຍວ່າ: “ຜູ້ໃດລະຫມາດສຸນັດ 12 ຣົກະອັດ ໃນຍາມສວາຍ ແລະ ຍາມຄ່ຳຄືນຂອງເຂົາ

---

[1] ບັນທຶກໂດຍອັລບຸກໍຣີ : ເລກທີ່ (6860).

ດ້ວຍຄວາມສະມັກໃຈ ພຣະອົງຈະສ້າງບ້ານໃຫ້ເຂົາໃນສວນສະຫວັນ”[1].

ຖ້າຫາກລະຫມາດສຸນັດກ່ອນລະຫມາດອັສຣີ 4 ຣໍກະອັດ, ກ່ອນລະຫມາດ ມັກຣິບ 2 ຣໍກະອັດ, ແລະ ກ່ອນລະຫມາດອີຊາ 2 ຣໍກະອັດ, ຍ່ອມເປັນສິ່ງທີ່ດີງາມ ເພາະສິ່ງດັ່ງກ່າວເປັນສິ່ງທີ່ຖືກຕ້ອງເຊິ່ງມີລາຍງານຈາກທ່ານ ນະບີ ຊັລລັລລໍຫຸ ອະລັຍ ຮີ ອະສັລລັມ ວ່າ:

(مَنْ حَافَظَ عَلَى أَرْبَعِ رَكَعَاتٍ قَبْلَ الظُّهْرِ، وَأَرْبَعٍ بَعْدَهَا حَرَّمَهُ اللَّهُ عَلَى النَّارِ).

(ຜູ້ໃດຮັກສາໄວ້ເຊິ່ງການລະຫມາດ 4 ຣໍກະອັດກ່ອນຊຸຫ໌ຣີ ແລະ 4 ຣໍກະອັດຫຼັງຈາກມັນ ອັລລໍຫ໌ຈະຊົງຫ້າມລາວ (ບໍ່ໃຫ້ຖືກໂຍນ) ເຂົ້າສູ່ໄຟນະລົກ)[2]. ແລະ ຄວາມໝາຍກໍ່ຄື ລາວໄດ້ເພີ່ມອີກສອງຣໍກະອັດ (ຮອບລະສອງຣໍກະອັດ) ຫຼັງຈາກລະຫມາດຊຸຫ໌ຣີ ຈາກຊຸນນະຫ໌ຣໍວາຕິບ ທີ່ມີຢູ່ແລ້ວ ເພາະຊຸນນະຫ໌ ຣໍວາຕິບນັ້ນມີ 4 ຣໍກະອັດ ກ່ອນຊຸຫ໌ຣີ ແລະ ສອງຣໍກະອັດ ຫຼັງລະຫມາດຊຸຫ໌ຣີ, ດັ່ງນັ້ນຫາກລາວເພີ່ມອີກສອງຣໍກະອັດ ຫຼັງຊຸຫ໌ຣີ ກໍ່ຈະໄດ້ຮັບຜົນລະບຸນຕາມທີ່ກ່າວໄວ້ໃນຫະດີຊຂອງທ່ານຍິງອຸມມຸ ຮາບີບະຫ໌ ຣໍດີຍັລລໍຮຸ ອັນຮາ.

ຂໍອັລລໍຫ໌ປະທານເຕົາຟີກ (ທາງນຳ) ຂໍຄວາມຈຳເລີນ ແລະ ຄວາມສັນຕິສຸກ ຈົ່ງປະສົບແກ່ທ່ານນະບີຂອງເຮົາ ຊັລລັລລໍຫຸ ອະລັຍຮີ ອະສັລລັມ ຄື ທ່ານນະບີ ມຸຮຳມັດ ລູກຂອງອັບດຸລລໍຫ໌ ຕະຫຼອດຮອດຄົນໃນຄອບຄົວພີ່ນ້ອງຂອງທ່ານ ແລະ

[1] ບັນທຶກໂດຍມຸສລິມ, ເລກທີ່ (728).

[2] ອະຫ໌ມັດ ເລກທີ່: (25547), ແລະ ຕິຣມີຊີ ເລກທີ່: (393), ແລະ ອະບູ ດາວູດ ເລກທີ່: (1077).

ສະຫາຍຂອງທ່ານທັ້ງຫຼາຍ ແລະ ຜູ້ທີ່ຮຽນຮູ້ສຶກສາປະຕິບັດຄວາມງາມຄວາມດີຕາມແນວທາງຂອງທ່ານຈົນຮອດວັນສິ້ນໂລກ ອາມີນ.

❊❊❊

حرمين

رئاسة الشؤون الدينية
بالمسجد الحرام والمسجد النبوي

# رسالة الحرمين

# Message of The Two Holy Mosques

Guidance content for the visitors of the Holy Mosque and the Prophet's Mosque in languages.

978-603-517-047-5